## 1. ແມ່ໝູທີ່ດີຄວນມີລັກສະນະດັ່ງນີ້

ແມ່ໝູທີ່ດີຄວນຈະມີນົມຢ່າງໜ້ອຍ 14 ເຕົ້າຫົວນົມຕ້ອງນ້ອຍ ແລະຍາວເພື່ອໃຫ້ໝູນ້ອຍສາມາດດູດກິນນົມໄດ້ງ່າຍ. ໝູນ້ອຍມັກຈະກິນຈາກຫົວນົມທີ່ເຄີຍດູດຢູ່ສະເໝີໝູນ້ອຍໂຕທີ່ເກີດມາກ່ອນໝູ່ ແລະໂຕທີ່ມີຄວາມແຂງແຮງຈະຊອກດູດຈະຊອກດູດນົມຈາກເຕົ້ານົມທີ່ຢູ່ຂ້ອນມາທາງຫົວຂອງແມ່ ຊຶ່ງເປັນເຕົ້ານົມທີ່ໃຫ້ນ້ຳນົມຫຼາຍກວ່າໝູແມ່ທີ່ເຖົ້າ ແລະໃຫ້ລູກມາຫຼາຍຊຸດແລ້ວ.



ຊຶ່ງແມ່ໝູອາດຈະບໍ່ສາມາດລ້ຽງລູກເອງໄດ້. ແມ່ໝູທີ່ດີຄວນໃຫ້ລູກ 3 ຫາ 4 ຊອກ ໝູແມ່ທີ່ເຖົ້າບໍ່ຄວນລ້ຽງໄວ້ເປັນແມ່ພັນ ເພາະຈະເຮັດໃຫ້ຊີ້ນເປືອງອາຫານ ແລະຈະເສຍຄ່າໃຊ້ຈ່າຍຢ່າງຫຼວງຫຼາຍເຮົາຄວນຈະຫາໝູແມ່ໂຕອື່ນມາທົດແທນຈະດີກວ່າ.

## 2. ການດູແລໝູນ້ອຍເກີດໃໝ່

ໝູນ້ອຍທຸກໂຕມີຄວາມຈຳເປັນທີ່ສຸດຕ້ອງໄດ້ກິນນ້ຳນົມໃສ່ພາຍໃນ 1 ຊົ່ວໂມງ ຫຼັງຈາກເກີດອອກມາ ອັດຕາການຈະເລີນເຕີບໂຕຂອງໝູນ້ອຍທຸກໂຕຈະບໍ່ເທົ່າທຽມກັນ, ບາງໂຕເກີດອອກມາໂຕຈະນ້ອຍ, ບາງໂຕອາດຈະໃຫ່ຍ. ໝູທີ່ເກີດໃໝ່ມັກຈະກັດກັນເພື່ອຍາດກິນອາຫານ ຫຼືກິນນົມແມ່ ແລະໂຕທີ່ນ້ອຍກວ່າໝູ່ມັກຈະກິນອາຫານບໍ່ທັນໝູ່ ຊຶ່ງຈະເຮັດໃຫ້ອັດຕາການຈະເລີນເຕີບໂຕຊ້າ ແລະອາດຈະຕາຍໃນທີ່ສຸດ.



## 3. ການລ້ຽງໝູນ້ອຍໃນກໍລະນີທີ່ແມ່ໝູຕາຍ

ເມື່ອແມ່ໝູຕາຍ ແລະບໍ່ສາມາດຫາແມ່ລ້ຽງໃຫ້ໝູນ້ອຍທີ່ກຳພ້າໄດ້ ທ່ານ ຕ້ອງລ້ຽງຫມູດ້ວຍຕົນເອງໂດຍປະຕິບັດດັ່ງລຸ່ມນີ້:

- ໃຫ້ໝູນ້ອຍກິນນົມຈາກຂວດນົມ ແລະຕ້ອງລ້າງຂວດນົມໃຫ້ສະອາດ
- ໃຫ້ຫມູນ້ອຍນອນຢູ່ຄອກ ຫຼືແກ່ດທີ່ສະອາດ, ແຫ້ງ, ອົບອຸ່ນ ແລະມີວັດຖຸຮອງພື້ນຄອກ
- ຕ້ອງໃຫ້ຫມູນ້ອຍກິນນົມທຸກໆ 1 ຫາ 2 ຊົ່ວໂມງ. ໃນກໍລະນີຈຳເປັນເຮົາສາມາດໃຊ້ນົມໃສຂອງງົວມາໃຫ້ໝູນ້ອຍກິນໃນ 3 ຫາ 4 ມື້ທຳອິດເພາະວ່າຈະແທນນ້ຳນົມໃສຂອງໝູໄດ້. ຖືວ່າເປັນວິທີທົດແທນທີ່ດີກວ່າໝູໝົດຫຼັງຈາກນັ້ນເຮົາກໍ່ສາມາດໃຫ້ນົມທຳມະດາໄດ້.

## 4. ການເອົາໝູນ້ອຍອອກນົມ ແລະການໃຫ້ອາຫານ

ໝູນ້ອຍ ອາຍຸ 1 ຫາ 2 ອາທິດຈະເລີ່ມສົນໃຈຢາກກິນອາຫານປະເພດເມັດ. ເຮົາຈະສາມາດທີ່ຈະໃຫ້ໝູນ້ອຍເລີ່ມກິນເມັດພືດ, ນົມຜົງ ຫຼືນ້ຳຕານເທື່ອລະໜ້ອຍ ໝູນ້ອຍຈະກິນນົມແມ່ ໄປຈົນກວ່າຈະມີ ອາຍຸປະມານ 7 ອາທິດແລ້ວຈິ່ງຢ່ານົມກ່ອນຈະຢ່ານົມໝູນ້ອຍຈະກິນນົມຫຼຸດລົງເທື່ອລະໜ້ອຍ ແລະກິນອາຫານເມັດເພີ່ມຂຶ້ນເລື້ອຍໆໄປຈົນກວ່າຈະຢ່ານົມ. ສ່ວນໝູນ້ອຍທີ່ລ້ຽງປະປ່ອຍຢູ່ຕາມທົ່ງຫຍ້ານັ້ນຈະ

ຊອກກິນອາຫານຢູ່ຕາມທຳມະຊາດດ້ວຍຕົນເອງ ສ່ວນໝູນ້ອຍທີ່ໄວ້ໃນຄອກເຮົາຈະຕ້ອງໄດ້ນຳອາຫານໄປໃຫ້ມັນກິນ. ການປ່ຽນອາຫານໝູນ້ອຍ ໃຫ້ພະຍາຍາມຄ່ອຍໆປ່ຽນເທື່ອລະໜ້ອຍ ເພື່ອຫຼີກເວັ້ນບັນຫາທີ່ອາດຈະເກີດຂື້ນກັບລະບົບລະລາຍອາຫານ.

ໝູທີ່ມີສຸກຂະພາບດີໃນເວລາໃຫ້ອາຫານຫມູຈະຟ້າວເຂົ້າມາກິ້ນທັນທີ, ແຕ່ຖ້າຫາກໝູເສີຍບໍ່ສົນໃຈມາກິນອາຫານນັ້ນສະແດງວ່າໝູໂຕດັ່ງກ່າວອາດຈະມີບັນຫາທາງດ້ານສຸກຂະພາບ ຫຼືເຈັບປ່ວຍໃນກໍ່ລະນີນີ້ທ່ານຈະຕ້ອງໄດ້ເອົາໃຈໃສ່ເບິ່ງແຍງຢ່າງໃກ້ຊິດ ແລະຊອກສາເຫດຂອງການເຈັບປ່ວຍຂອງສັດໂຕນັ້ນ .


**Laos Extension for Agriculture Project**
**P.O. Box 9159**
**Vientiane, Lao P.D.R.**
**Tel/fax: 021 732 162 Mobile: 020 5526277**
**Email: leap@laoex.org**
**Email: cetdu@laoex.org**



ກະຊວງກະສິກຳ ແລະ ປ່າໄມ້
ກອງສົ່ງເສີມກະສິກຳ ແລະ ປ່າໄມ້ ແຫ່ງຊາດ
ພະແນກ ສົ່ງເສີມ ແລະ ຄຸ້ມຄອງໂຄງການ
ໜ່ວຍງານ ພັດທະນາຮູບແບບ ສົ່ງເສີມ ແລະ ຝຶກອົບຮົມ


# ຂໍ້ແນະນຳ

# ເຕັກນິກການລ້ຽງໝູ




ຈັດຕັ້ງປະຕິບັດໂດຍ: **CETDU**
(ໜ່ວຍງານພັດທະນາຮູບແບບສົ່ງເສີມ ແລະ ຝຶກອົບຮົມ ຂັ້ນສູນກາງ)
ຮ່ວມກັບ:
ໂຄງການ ສົ່ງເສີມ ກະສິກຳ **(LEAP)**